ສາລະບານ

ມະຕິຕົກລົງ....................................................................................................................3
ລັດຖະດຳລັດ ...................................................................................................................4
ກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ ............................................................................5
ໝວດທີ I ບົດບັນຍັດທົ່ວໄປ...................................................................................................5
ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ..................................................5
ມາດຕາ 2. ນິຍາມຄຳສັບ.......................................................................................................5
ມາດຕາ 3. ການຄຸ້ມຄອງຊັບພະຍາກອນ ແລະ ອຸປະກອນ ໂທລະຄົມມະນາຄົມ...................................7
ມາດຕາ 4. ນະໂຍບາຍສົ່ງເສີມການລົງທຶນດ້ານໂທລະຄົມມະນາຄົມ ..............................................7
ມາດຕາ 5. ກອງທຶນພັດທະນາການໂທລະຄົມມະນາຄົມ................................................................7
ມາດຕາ 6. ການພົວພັນ ແລະ ຮ່ວມມືສາກົນ ..............................................................................7
ໝວດທີ II ລະບົບ ແລະ ປະເພດການບໍລິການໂທລະຄົມມະນາຄົມ ຢູ່ ສປປ ລາວ..................................7
ມາດຕາ 7. ລະບົບໂທລະຄົມມະນາຄົມ ຢູ່ ສປປ ລາວ. ...............................................................7
ມາດຕາ 8. ປະເພດການບໍລິການໂທລະຄົມມະນາຄົມ ຢູ່ ສປປ ລາວ ..............................................8
ໝວດທີ III ລະບຽບການກ່ຽວກັບການບໍລິການໂທລະຄົມມະນາຄົມ....................................................8
ມາດຕາ 9. ລະບຽບການທົ່ວໄປ................................................................................................8
ມາດຕາ 10. ຄ່າທຳນຽມ ແລະຄ່າບໍລິການໂທລະຄົມມະນາຄົມ.........................................................9
ມາດຕາ 11. ການກຳນົດອັດຕາຄ່າທຳນຽມ ແລະ ຄ່າບໍລິການໂທລະຄົມມະນາຄົມ.................................9
ມາດຕາ 12. ຂອບເຂດການບໍລິການໂທລະຄົມມະນາຄົມ ...............................................................9
ໝວດທີ IV ການດຳເນີນທຸລະກິດ ການບໍລິການໂທລະຄົມມະນາຄົມ...................................................9
ມາດຕາ 13. ການຂໍອະນຸຍາດສ້າງຕັ້ງວິສາຫະກິດການບໍລິການໂທລະຄົມມະນາຄົມ ..............................9
ມາດຕາ 14. ສິດ ແລະ ໜ້າທີ່ຂອງຜູ້ໃຫ້ການບໍລິການໂທລະຄົມມະນາຄົມ .........................................10
ມາດຕາ 15. ສິດ ແລະ ໜ້າທີ່ ຂອງຜູ້ໃຊ້ການບໍລິການ ໂທລະຄົມມະນາຄົມ .......................................11
ໝວດທີ V ການຄຸ້ມຄອງ ແລະ ການກວດກາໂທລະຄົມມະນາຄົມ...................................................11
ມາດຕາ 16. ຈຸດປະສົງຂອງການຄຸ້ມຄອງ ແລະ ການກວດກາ .......................................................11
ມາດຕາ 17. ອົງການຄຸ້ມຄອງ ແລະ ກວດກາໂທລະຄົມມະນາຄົມ...................................................12
ມາດຕາ 18. ສິດ ແລະ ໜ້າທີ່ຂອງກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ..........................12
ມາດຕາ 19. ສິດ ແລະ ໜ້າທີ່ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ......................................................................................13
ມາດຕາ 20. ສິດ ແລະ ໜ້າທີ່ຂອງຫ້ອງການຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງປະຈຳເມືອງ 13
ມາດຕາ 21. ເນື້ອໃນການກວດກາ..........................................................................................13
ມາດຕາ 22. ຮູບການກວດກາ.................................................................................................14
ໝວດທີ VI ການແກ້ໄຂຂໍ້ຂັດແຍ່ງ ........................................................................................14
ມາດຕາ 23. ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ ................................................................14

ມາດຕາ 24. ການແກ້ໄຂຂໍ້ຂັດແຍ່ງທາງແພ່ງ ........................................................................ 14
ໝວດທີ VII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ .......................................... 15
ມາດຕາ 25. ນະໂຍາບາຍຕໍ່ຜູ້ມີຜົນງານ ........................................................................ 15
ມາດຕາ 26. ມາດຕະການຕໍ່ຜູ້ລະເມີດ ........................................................................ 15
ມາດຕາ 27.  ມາດຕະການສຶກສາອົບຮົມ ........................................................................ 15
ມາດຕາ 28. ມາດຕະການປັບໃໝ ........................................................................ 15
ມາດຕາ 29. ມາດຕະການທາງອາຍາ. ........................................................................ 16
ມາດຕາ 30. ມາດຕະການໂທດເພີ້ມ. ........................................................................ 16
ໝວດທີ VIII ບົດບັນຍັດສຸດທ້າຍ ........................................................................ 17
ມາດຕາ 31. ການຈັດຕັ້ງປະຕິບັດ ........................................................................ 17
ມາດຕາ 32. ຜົນສັກສິດ ........................................................................ 17

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ — ເລກທີ 05 /ສພຊ

ວຽງຈັນ, ວັນທີ 10 ເມສາ 2001

# ມະຕິຕົກລົງ

## ຂອງສະພາແຫ່ງຊາດ
## ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການຕົກລົງຮັບຮອງເອົາກົດຫມາຍວ່າດ້ວຍ ການໂທລະຄົມມະນາຄົມ

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດຫມາຍວ່າດ້ວຍ ສະພາແຫ່ງຊາດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເຫນີຂອງນາຍົກລັດຖະມົນຕີ ສະບັບເລກທີ 29/ນຍ, ລົງວັນທີ 19 ມີນາ 2001.

ພາຍຫລັງທີ່ໄດ້ຄົ້ນຄ້ວາ, ພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດຫມາຍວ່າດ້ວຍ ການໂທລະຄົມມະນາຄົມ ໃນກອງປະຊຸມສະໄຫມສາມັນເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ IV, ໃນວາລະປະຊຸມຕອນເຊົ້າຂອງວັນທີ 10 ເມສາ 2001.

ກອງປະຊຸມໄດ້ຕົກລົງ:

ມາດຕາ 1: ຮັບຮອງເອົາກົດຫມາຍ ວ່າດ້ວຍການໂທລະຄົມມະນາຄົມ ດ້ວຍຄະແນນສຽງເປັນເອກະສັນ.

ມາດຕາ 2: ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ປະທານສະພາແຫ່ງຊາດ
ສະຫມານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 50 ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍ
ການໂທລະຄົມມະນາຄົມ

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໝວດທີ V,ມາດຕາ 53, ຂໍ້ 1,
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 05/ສພຊ, ລົງວັນທີ 10 ເມສາ 2001 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການໂທລະຄົມມະນາຄົມ.
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ, ລົງວັນທີ 20 ເມສາ 2001.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

<u>ມາດຕາ 1</u>: ປະກາດໃຊ້ກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ.

<u>ມາດຕາ 2</u>: ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 25 ເມສາ 2001.
ປະທານປະເທດ ແຫ່ງ ສປປ ລາວ
ຄຳໄຕ ສີພັນດອນ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ | ເລກທີ 02/ສພຊ

ວັນທີ 10 ເມສາ 2001

# ກົດໝາຍ ວ່າດ້ວຍການໂທລະຄົມມະນາຄົມ

## ໝວດທີ I ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງກົດໝາຍວ່າດ້ວຍການໂທລະຄົມມະນາຄົມ**

ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ມີໜ້າທີ່ກຳນົດຫລັກການ, ລະບຽບການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານໂທລະຄົມມະນາຄົມ, ການຄຸ້ມຄອງຄື້ນຄວາມຖີ່ ຊຶ່ງປະກອບດ້ວຍ: ຄື້ນຄວາມຖີ່ການຕິດຕໍ່ສື່ສານ, ການກະຈາຍສຽງ, ໂທລະພາບ, ຄື້ນຄວາມຖີ່ອື່ນໆ; ການບໍລິຫານເລກໝາຍໂທລະຄົມມະນາຄົມ, ໂຄງລ່າງພື້ນຖານໂທລະຄົມມະນາຄົມ; ການຄຸ້ມຄອງ ແລະ ການນຳໃຊ້ຕຳແໜ່ງວົງໂຄຈອນດາວທຽມ, ລະຫັດອິນເຕີແນັດລະດັບສູງສຸດຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ; ການຄຸ້ມຄອງການບໍລິການໂທລະຄົມມະນາຄົມປະເພດຕ່າງໆ ລວມທັງການບໍລິການອິນເຕີແນັດຢູ່ພາຍໃນ ແລະ ລະຫວ່າງປະເທດ ແນໃສ່ຮັບປະກັນການບໍລິການໃຫ້ແກ່ສັງຄົມ ໃນການຕິດຕໍ່ສື່ສານ ຫລື ການສົ່ງ ແລະ ການຮັບຂໍ້ມູນ, ຂ່າວສານໃຫ້ທົ່ວເຖິງ, ມີຄຸນນະພາບ, ຖືກຕ້ອງ, ຊັດເຈນ, ມີຄວາມສະດວກ, ວ່ອງໄວ, ປອດໄພ ແລະ ຍຸຕິທຳ ຊຶ່ງຈະເປັນການປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດນັບທັງການພົວພັນ ແລະ ແລກປ່ຽນຂໍ້ມູນ, ຂ່າວສານກັບສາກົນ.

**ມາດຕາ 2. ນິຍາມຄຳສັບ**

1. ການໂທລະຄົມມະນາຄົມ ໝາຍເຖິງການສົ່ງ ແລະ ການຮັບຂໍ້ມູນ, ຂ່າວສານ, ສຽງ, ຮູບພາບ, ຕົວເລກ, ຕົວອັກສອນ, ເຄື່ອງໝາຍຢູ່ພາຍໃນ ແລະ ລະຫວ່າງປະເທດ ຜ່ານສາຍທອງ, ສາຍໂລຫະປະສົມ, ສາຍກາບໄຍແສງ, ຄື້ນແມ່ເຫລັກໄຟຟ້າ ແລະ ອື່ນໆ;

2. ຊັບພະຍາກອນໂທລະຄົມມະນາຄົມໝາຍເຖິງຄື້ນຄວາມຖີ່, ເລກໝາຍໂທລະຄົມມະນາຄົມ, ຕຳແໜ່ງວົງໂຄຈອນດາວທຽມລວມທັງໂຄງລ່າງພື້ນຖານໂທລະຄົມມະນາຄົມ;

3. ເລກໝາຍໂທລະຄົມມະນາຄົມ ໝາຍເຖິງເລກໝາຍ, ຕົວອັກສອນ ຫລື ສັນຍາລັກອື່ນໆ ທີ່ບົ່ງບອກເຖິງຕາໜ່າງໂທລະຄົມມະນາຄົມ ແລະ ອຸປະກອນຕົ້ນທາງ ຫລື ປາຍທາງປະຈຳຕົວເມືອງ, ແຂວງ ແລະ ປະເທດໃດໜຶ່ງເພື່ອການຕິດຕໍ່ສື່ສານໂທລະຄົມມະນາຄົມ;

4. ໂຄງລ່າງພື້ນຖານໂທລະຄົມມະນາຄົມໝາຍເຖິງອາຄານ, ສິ່ງປຸກສ້າງພ້ອມດ້ວຍອຸປະກອນ ແລະ ສາຍສົ່ງສັນຍານ ເພື່ອຊ່ວຍໜູນໃຫ້ການບໍລິການຕາໜ່າງໂທລະຄົມມະນາຄົມເຊັ່ນ: ທໍ່ໃສ່ສາຍ, ເສົາເນັ່ງສາຍ, ເສົາໂທລະຄົມມະນາຄົມ, ສາຍອາກາດ,ສາຍກາບໃຍແສງ, ສາຍທອງແດງ, ສາຍສັນຍານໂທລະຄົມມະນາຄົມ ແລະ ອື່ນໆ;

5. ອຸປະກອນໂທລະຄົມມະນາຄົມ ໝາຍເຖິງເຄື່ອງຈັກໂທລະຄົມມະນາຄົມປະເພດຕ່າງໆ ເຊັ່ນ: ສູນກາງໂທລະສັບ, ໜ່ວຍໂທລະສັບ, ເຄື່ອງສົ່ງ ແລະ ຮັບວິທະຍຸ, ເຄື່ອງຈັກໂທລະເລກ, ເຄື່ອງຈັກໂທລະພິມ, ເຄື່ອງຈັກໂທລະສານ, ເຄື່ອງຄອມພິວເຕີ, ເຄື່ອງກຳເນີດໄຟຟ້າ, ເຄື່ອງຫລໍ່ລ້ຽງໄຟຟ້າ ແລະ ສິ່ງທີ່ພົວພັນອື່ນໆ ລວມທັງສາຍທອງ, ສາຍໂລຫະປະສົມ, ສາຍກາບໄຍແສງ, ສາຍອາກາດ ຫລື ວັດຖຸທີ່ນຳໃຊ້ເຂົ້າໃນການເຊື່ອມຕໍ່ກັບລະບົບຕາໜ່າງໂທລະຄົມມະນາຄົມ;

6. ອຸປະກອນປາຍທາງໝາຍເຖິງອຸປະກອນໂທລະຄົມມະນາຄົມ ທີ່ຜູ້ໃຊ້ການບໍລິການນຳໃຊ້ເຊັ່ນ: ໜ່ວຍໂທລະສັບມີສາຍ ຫລື ບໍ່ມີສາຍ, ໜ່ວຍໂທລະສານ, ໜ່ວຍຄອມພິວເຕີ, ບັນດາອຸປະກອນທີ່ເປັນສ່ວນປະກອບ ແລະ ລະບົບສາຍພາຍໃນ ຊຶ່ງເປັນກຳມະສິດຂອງຜູ້ໃຊ້ການບໍລິການ;

7. ຕາໜ່າງໂທລະຄົມມະນາຄົມ ໝາຍເຖິງລະບົບລວມສູນ ຂອງໂຄງລ່າງພື້ນຖານໂທລະຄົມມະນາຄົມ ຊຶ່ງປະກອບດ້ວຍລະບົບມີສາຍ ແລະ ບໍ່ມີສາຍ ຫລື ທັງສອງລະບົບເຊື່ອມຕໍ່ເຂົ້າກັນ ລວມທັງ ບັນດາອຸປະກອນທີ່ປະກອບເຂົ້າໃນການບໍລິການໂທລະຄົມມະນາຄົມປະເພດໜຶ່ງ ຫລື ຫລາຍປະເພດ;

8. ອິນເຕີແນັດ ແມ່ນການເຊື່ອມຕໍ່ບັນດາລະບົບຕາໜ່າງຄອມພິວເຕີຕ່າງໆ ໃນທົ່ວໂລກໂດຍຜ່ານ ຕາໜ່າງໂທລະຄົມມະນາຄົມເພື່ອການສົ່ງ, ການຮັບ ແລະ ການແລກປ່ຽນຂໍ້ມູນ, ຂ່າວສານຕ່າງໆ;

9. ລະຫັດອິນເຕີແນັດລະດັບສູງສຸດຂອງປະເທດ ແມ່ນຕົວອັກສອນຫຍໍ້ທີ່ອົງການອິນເຕີແນັດສາກົນ ໄດ້ກຳນົດໃຫ້ສະເພາະແຕ່ລະປະເທດນຳໃຊ້ເປັນລະຫັດລະດັບສູງສຸດ ເພື່ອຄວາມສະດວກໃນການຈຳແນກປະເທດໃນລະບົບອິນເຕີແນັດ;

10. ຄື້ນຄວາມຖີ່ ໝາຍເຖິງການກະຈາຍຄື້ນແມ່ເຫລັກໄຟຟ້າ ໃນຍ່ານຄວາມຖີ່ລະຫວ່າງສາມ ກີໂລເຮີດເຖິງສາມພັນ ຈີກາເຮີດ ເພື່ອນຳໃຊ້ໃນການຕິດຕໍ່ສື່ສານ ຫລື ການສົ່ງ ແລະ ການຮັບຂໍ້ມູນ, ຂ່າວສານ;

11. ຕຳແໜ່ງວົງໂຄຈອນດາວທຽມໝາຍເຖິງຕຳແໜ່ງຂອງໜ່ວຍ ຫລື ສະຖານີດາວທຽມປະຈຳທີ່ ຫລື ເຄື່ອນທີ່ ແລະ ວົງໂຄຈອນສຳລັບໜ່ວຍ ຫລື ສະຖານີດາວທຽມດັ່ງກ່າວຢູ່ໃນຫ້ວງອະວະກາດ;

12. ສະຖານີວິທະຍຸຕິດຕໍ່ສື່ສານສະເພາະ ໝາຍເຖິງສະຖານີວິທະຍຸຕິດຕໍ່ສື່ສານ ທີ່ໄດ້ຮັບອະນຸຍາດ ຈາກກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ໃຫ້ຕິດຕັ້ງຂຶ້ນ ແລະ ນຳໃຊ້ ຄື້ນຄວາມຖີ່ເພື່ອການຕິດຕໍ່ສື່ສານສະເພາະວຽກງານຂອງການຈັດຕັ້ງໃດໜຶ່ງ;

13. ການເຊື່ອມຕໍ່ຕາໜ່າງ ໝາຍເຖິງການເຊື່ອມຕໍ່ ລະຫວ່າງຕາໜ່າງ ຂອງຜູ້ໃຫ້ການບໍລິການໂທລະຄົມມະນາຄົມປະເພດຕ່າງໆ ເພື່ອໃຫ້ຜູ້ໃຊ້ການບໍລິການຂອງຕາໜ່າງເຫລົ່ານັ້ນສາມາດຕິດຕໍ່ສື່ສານກັນໄດ້;

14. ຜູ້ໃຫ້ການບໍລິການ ໝາຍເຖິງນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ສ້າງຕັ້ງວິສາຫະກິດດຳເນີນການບໍລິການໂທລະຄົມມະນາຄົມ;

15. ຜູ້ໃຊ້ການບໍລິການໝາຍເຖິງບຸກຄົນ ຫລື ການຈັດຕັ້ງ ທີ່ໃຊ້ການບໍລິການໂທລະຄົມມະນາຄົມ ປະເພດຕ່າງໆ;

16. ການບໍລິການຕໍ່ ໝາຍເຖິງການໃຫ້ການບໍລິການດ້ານໂທລະຄົມມະນາຄົມອີກຕໍ່ໜຶ່ງໃຫ້ແກ່ຜູ້ໃຊ້ການບໍລິການ.

## ມາດຕາ 3. ການຄຸ້ມຄອງຊັບພະຍາກອນ ແລະ ອຸປະກອນ ໂທລະຄົມມະນາຄົມ

ລັດເປັນຜູ້ຄຸ້ມຄອງຊັບພະຍາກອນ ແລະ ການຂຶ້ນທະບຽນການນຳໃຊ້ອຸປະກອນໂທລະຄົມມະນາຄົມ ຢູ່ພາຍໃນປະເທດ.

## ມາດຕາ 4. ນະໂຍບາຍສົ່ງເສີມການລົງທຶນດ້ານໂທລະຄົມມະນາຄົມ

ລັດສົ່ງເສີມໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ແຂ່ງຂັນ ແລະ ຮ່ວມມືກັນ ລົງທຶນເຂົ້າໃນການກໍ່ສ້າງ, ການພັດທະນາ, ການຂະຫຍາຍຕາໜ່າງໂທລະຄົມມະນາຄົມ, ການບໍລິການໂທລະຄົມມະນາຄົມຕາມຮູບການ, ປະເພດ ແລະ ຂອບເຂດທີ່ລັດກຳນົດໃຫ້.

## ມາດຕາ 5. ກອງທຶນພັດທະນາການໂທລະຄົມມະນາຄົມ

ເພື່ອພັດທະນາການໂທລະຄົມມະນາຄົມໃຫ້ຂະຫຍາຍຕົວ, ກ້າວໜ້າ ແລະ ທັນສະໄໝ ລັດອະນຸຍາດ ໃຫ້ສ້າງຕັ້ງກອງທຶນພັດທະນາການໂທລະຄົມມະນາຄົມຂຶ້ນ ຊຶ່ງມີແຫລ່ງລາຍຮັບມາຈາກການລະດົມທຶນຊ່ວຍເຫລືອ ຢູ່ພາຍໃນປະເທດ, ຈາກຕ່າງປະເທດ, ຈາກອົງການຈັດຕັ້ງສາກົນຕ່າງໆ ແລະ ຈາກສ່ວນໜຶ່ງ ຂອງລາຍຮັບຄ່າທຳນຽມ ແລະ ຄ່າບໍລິການໂທລະຄົມມະນາຄົມ.

## ມາດຕາ 6. ການພົວພັນ ແລະ ຮ່ວມມືສາກົນ

ລັດສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ສາກົນ ບົນພື້ນຖານການເຄົາລົບເອກະລາດ, ອະທິປະໄຕຂອງກັນ ແລະ ກັນ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ໃນການພັດທະນາໂຄງລ່າງພື້ນຖານເຕັກໂນໂລຊີ, ຂໍ້ມູນ, ຂ່າວສານໂທລະຄົມມະນາຄົມ, ການເຊື່ອມຕໍ່ຕາໜ່າງໂທລະຄົມມະນາຄົມ, ການບໍລິການໂທລະຄົມມະນາຄົມປະເພດຕ່າງໆ ໃຫ້ທົ່ວເຖິງ, ການບໍລິຫານ ແລະ ປະສານຄື້ນຄວາມຖີ່, ຕຳແໜ່ງວົງໂຄຈອນດາວທຽມຢູ່ພາຍໃນ ແລະ ກັບຕ່າງປະເທດ ເພື່ອເຮັດໃຫ້ປະຊາຊົນໄດ້ຊົມໃຊ້ການຕິດຕໍ່ສື່ສານທີ່ກ້າວໜ້າ ແລະ ທັນສະໄໝ.

# ໝວດທີ II ລະບົບ ແລະ ປະເພດການບໍລິການໂທລະຄົມມະນາຄົມ ຢູ່ ສປປ ລາວ

## ມາດຕາ 7. ລະບົບໂທລະຄົມມະນາຄົມ ຢູ່ ສປປ ລາວ.

ລະບົບໂທລະຄົມມະນາຄົມທີ່ນຳໃຊ້ບໍລິການ ຢູ່ ສປປ ລາວ ມີສາມລະບົບ ດັ່ງນີ້:

1. ລະບົບໂທລະຄົມມະນາຄົມແບບມີສາຍ;

2. ລະບົບໂທລະຄົມມະນາຄົມແບບບໍ່ມີສາຍ;

3. ລະບົບໂທລະຄົມມະນາຄົມ ທີ່ເຊື່ອມຕໍ່ທັງດ້ວຍແບບມີສາຍ ແລະ ບໍ່ມີສາຍ.

ລະບົບໂທລະຄົມມະນາຄົມດັ່ງກ່າວນີ້ ສາມາດນຳໃຊ້ໃນການຕິດຕໍ່ສື່ສານປະເພດຕ່າງໆ ເຊັ່ນ: ໂທລະເລກ, ໂທລະສັບ, ໂທລະພິມ, ໂທລະສານ, ວິທະຍຸປະຈຳຕົວ, ຈົດໝາຍເອເລັກໂຕຣນິກ, ອິນເຕີແນັດ ແລະ ອື່ນໆ.

### ມາດຕາ 8. ປະເພດການບໍລິການໂທລະຄົມມະນາຄົມ ຢູ່ ສປປ ລາວ

ການບໍລິການໂທລະຄົມມະນາຄົມຢູ່ ສປປ ລາວ ມີປະເພດຕ່າງໆ ເຊັ່ນ:

- ໂທລະສັບຕິດຕັ້ງປະຈຳທີ່;
- ໂທລະສັບທາງໄກພາຍໃນປະເທດ;
- ໂທລະສັບລະຫວ່າງປະເທດ;
- ໂທລະສັບເຄື່ອນທີ່;
- ໂທລະສັບສາທາລະນະ;
- ໂທລະສານ;
- ໂທລະພິມ;
- ໂທລະເລກ;
- ວິທະຍຸປະຈຳຕົວ;
- ວິທະຍຸກະຈາຍສຽງ ແລະ ໂທລະພາບ;
- ວິທະຍຸເຄື່ອນທີ່ສະເພາະກິດຈະການ;
- ຈົດໝາຍເອເລັກໂຕຣນິກ;
- ອິນເຕີແນັດ;
- ໂທລະສັບຜ່ານລະບົບອິນເຕີແນັດ;
- ການບໍລິການສາຍ ຫລື ວົງຈອນເຊົ່າ ແລະ ຈານດາວທຽມຂະໜາດນ້ອຍ ຫລື ວີແຊັດ;
- ການບໍລິການໂຄ່ງລ່າງພື້ນຖານໂທລະຄົມມະນາຄົມ;
- ການບໍລິການເສີມ ແລະ ອື່ນໆ.

## ໝວດທີ III ລະບຽບການກ່ຽວກັບການບໍລິການໂທລະຄົມມະນາຄົມ

### ມາດຕາ 9. ລະບຽບການທົ່ວໄປ.

ການບໍລິການໂທລະຄົມມະນາຄົມທຸກປະເພດ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການວ່າດ້ວຍການໂທລະຄົມມະນາຄົມ, ກົດໝາຍ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ ຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວຢ່າງເຂັ້ມງວດ.

### ມາດຕາ 10. ຄ່າທຳນຽມ ແລະຄ່າບໍລິການໂທລະຄົມມະນາຄົມ

ຄ່າທຳນຽມ ແລະ ຄ່າບໍລິການໂທລະຄົມມະນາຄົມ ແມ່ນລາຍຮັບທີ່ໄດ້ມາຈາກກິດຈະການໂທລະຄົມມະນາຄົມປະເພດຕ່າງໆເຊັ່ນ: ຄ່າສິດນຳໃຊ້ຕຳແໜ່ງວົງໂຄຈອນດາວທຽມ, ລະຫັດອິນເຕີແນັດລະດັບສູງສຸດຂອງປະເທດ, ຄ່າລິຂະສິດ, ຄ່າທຳນຽມອອກໃບອະນຸຍາດການນຳໃຊ້ຄື້ນຄວາມຖີ່, ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຕິດຕໍ່ສື່ສານ ຫລື ການສົ່ງ ແລະ ການຮັບຂໍ້ມູນ, ຂ່າວສານ, ການຜະລິດ, ການສົ່ງອອກ, ການນຳເຂົ້າ, ການຈຳໜ່າຍພາຫະນະ ແລະ ອຸປະກອນໂທລະຄົມມະນາຄົມ, ຄ່າທຳນຽມ ແລະ ຄ່າບໍລິການອື່ນໆກ່ຽວກັບກິດຈະການໂທລະຄົມມະນາຄົມ.

### ມາດຕາ 11. ການກຳນົດອັດຕາຄ່າທຳນຽມ ແລະ ຄ່າບໍລິການໂທລະຄົມມະນາຄົມ

ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສົມທົບກັບ ກະຊວງການເງິນ ແລະພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄ້ວາລະບຽບການກ່ຽວກັບການກຳນົດອັດຕາຄ່າທຳນຽມ, ຄ່າບໍລິການ, ຄ່າລິຂະສິດໂທລະຄົມມະນາຄົມ ເພື່ອນຳສະເໜີ ລັດຖະບານ ພິຈາລະນາຕົກລົງ.

### ມາດຕາ 12. ຂອບເຂດການບໍລິການໂທລະຄົມມະນາຄົມ

ຂອບເຂດການບໍລິການໂທລະຄົມມະນາຄົມຢູ່ ສ ປປ ລາວ ມີຄື:

- ຂອບເຂດການບໍລິການໂທລະຄົມມະນາຄົມ ພາຍໃນປະເທດ;
- ຂອບເຂດການບໍລິການໂທລະຄົມມະນາຄົມ ລະຫວ່າງປະເທດ.

ຂອບເຂດການບໍລິການ ໂທລະຄົມມະນາຄົມພາຍໃນປະເທດ ແມ່ນການບໍລິການໂທລະຄົມມະນາຄົມປະເພດຕ່າງໆ ຢູ່ພາຍໃນປະເທດ.

ຂອບເຂດການບໍລິການ ໂທລະຄົມມະນາຄົມລະຫວ່າງປະເທດ ແມ່ນການບໍລິການໂທລະຄົມມະນາຄົມລະຫວ່າງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກັບຕ່າງປະເທດ ຊຶ່ງຕ້ອງໄດ້ປະຕິບັດຕາມສົນທິສັນຍາ ຫລື ສັນຍາສາກົນ ທີ່ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເຂົ້າຮ່ວມ.

## ໝວດທີ IV ການດຳເນີນທຸລະກິດ ການບໍລິການໂທລະຄົມມະນາຄົມ

### ມາດຕາ 13. ການຂໍອະນຸຍາດສ້າງຕັ້ງວິສາຫະກິດການບໍລິການໂທລະຄົມມະນາຄົມ

ການຂໍອະນຸຍາດສ້າງຕັ້ງ ວິສາຫະກິດການບໍລິການໂທລະຄົມມະນາຄົມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທຸລະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສຳລັບການລົງທຶນຂອງຕ່າງປະເທດນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍທຸລະກິດ, ກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

## ມາດຕາ 14. ສິດ ແລະ ໜ້າທີ່ຂອງຜູ້ໃຫ້ການບໍລິການໂທລະຄົມມະນາຄົມ

ຜູ້ໃຫ້ການບໍລິການໂທລະຄົມມະນາຄົມມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ສະເໜີຂໍການພິຈາລະນາຕົກລົງ ຕາມຄວາມເໝາະສົມ ຈາກລັດຖະບານ, ຈາກ ການຈັດຕັ້ງ ຫລື ຈາກບຸກຄົນທີ່ກ່ຽວຂ້ອງໃນການນຳໃຊ້ສະຖານທີ່, ທີ່ດິນ, ຖະໜົນ, ຮ່ອງລະບາຍນ້ຳ, ອາຄານ, ສິ່ງກໍ່ສ້າງ ແລະ ອື່ນໆ ໂດຍສອດຄ່ອງກັບລະບຽບກົດໝາຍ;

2. ສະເໜີອັດຕາຄ່າທຳນຽມ ແລະ ຄ່າບໍລິການໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມໃນແຕ່ລະໄລຍະຕໍ່ກະຊວງ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ;

3. ໂຈະການບໍລິການຊົ່ວຄາວ ຫລື ຍາວນານຕໍ່ຜູ້ໃຊ້ການບໍລິການ ທີ່ລະເມີດລະບຽບການບໍລິການໂທລະຄົມມະນາຄົມເຊັ່ນ:

- ບໍ່ຊຳລະຄ່າທຳນຽມບໍລິການຕາມປົກກະຕິ ພາຍຫລັງທີ່ມີການກ່າວເຕືອນແລ້ວ;
- ຕໍ່ພວງໂທລະສັບໃຫ້ຜູ້ອື່ນໂດຍບໍ່ໄດ້ຮັບອະນຸຍາດ ຫລື ລະເມີດລະບຽບການໂທລະຄົມມະນາຄົມອື່ນໆ;

4. ຂະຫຍາຍຕາໜ່າງໂທລະຄົມມະນາຄົມ ໂດຍສະເພາະໂທລະສັບພື້ນຖານ ໃຫ້ສາມາດສະໜອງການບໍລິການ ແກ່ຜູ້ໃຊ້ການບໍລິການລົງຮອດທ້ອງຖິ່ນ ຕາມຂອບເຂດທີ່ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງກຳນົດໃຫ້;

5. ຮັບປະກັນການເຊື່ອມຕໍ່, ການຈັດສັນລະບົບສັນຍານ, ເລກໝາຍໂທລະຄົມມະນາຄົມຂອງຕາໜ່າງ ແລະ ສູນຂໍ້ມູນ, ຂ່າວສານ ກັບບັນດາຜູ້ໃຫ້ບໍລິການໂທລະຄົມມະນາຄົມ ອື່ນໆ ເພື່ອສົ່ງຂໍ້ມູນ, ຂ່າວສານ ໂທລະຄົມມະນາຄົມໄປສູ່ຈຸດທີ່ໝາຍ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

6. ໃຫ້ການບໍລິການໂທລະຄົມມະນາຄົມຕາມປະເພດທີ່ຕົນໄດ້ຮັບອະນຸຍາດ;

7. ຮັບປະກັນການບໍລິການໃຫ້ຜູ້ໃຊ້ການບໍລິການຢ່າງທົ່ວເຖິງ, ມີຄຸນນະພາບ, ຖືກຕ້ອງ, ຊັດເຈນ, ມີຄວາມສະດວກ, ວ່ອງໄວ, ປອດໄພ ແລະ ຍຸຕິທຳ;

8. ຜະລິດ, ສົ່ງອອກ, ນຳເຂົ້າ, ຈຳໜ່າຍ ແລະ ຕິດຕັ້ງອຸປະກອນໂທລະຄົມມະນາຄົມທີ່ຮັບປະກັນທາງດ້ານມາດຕະຖານເຕັກນິກຕາມຄວາມຕ້ອງການຂອງຜູ້ໃຊ້ການບໍລິການ;

9. ປະຕິບັດລະບຽບການດ້ານບັນຊີການເງິນ, ສະຖິຕິ, ລະບອບລາຍງານ ແລະ ພັນທະຕ່າງໆທີ່ລັດໄດ້ກຳນົດໄວ້;

10. ຕ້ອງຢູ່ພາຍໃຕ້ການກວດກາຂອງຂະແໜງການທີ່ກ່ຽວຂ້ອງ;

11. ໃຫ້ບຸລິມະສິດ ໃນການສະໜອງການບໍລິການໂທລະຄົມມະນາຄົມແກ່ອົງການຈັດຕັ້ງຂອງລັດ;

12. ຫ້າມນຳເອົາໃບອະນຸຍາດສ້າງຕັ້ງ ແລະ ດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫລື ໂອນໃຫ້ຜູ້ອື່ນ;

13. ຫ້າມນຳໃຊ້ການຕິດຕໍ່ສື່ສານເພື່ອທຳລາຍຄວາມໝັ້ນຄົງ, ຄວາມສະຫງົບ, ການພັດທະນາເສດຖະ ກິດ-ສັງຄົມ ຫລື ວັດທະນະທຳຂອງຊາດ.

ຫ້າມນຳໃຊ້ລະບົບໂທລະຄົມມະນາຄົມ ເພື່ອສ້າງຄວາມເສື່ອມເສຍແກ່ກຽດສັກສີ ຂອງບຸກຄົນ ຫລື ການຈັດຕັ້ງ.

ຫ້າມດັດປັບຄື້ນຄວາມຖີ່ ຫລື ນຳໃຊ້ອຸປະກອນ, ຕາໜ່າງ ໂທລະຄົມມະນາຄົມຂອງຕົນເຂົ້າໃສ່ຄື້ນຄວາມຖີ່ ຫລື ອຸປະກອນ, ຕາໜ່າງໂທລະຄົມມະນາຄົມ ຂອງຜູ້ໃຫ້ການບໍລິການອື່ນໆ ຫລື ຂອງຜູ້ໃຊ້ການບໍລິການ ເພື່ອສະກັດກັ້ນ, ລົບກວນ, ບຸກລຸກ, ທຳລາຍ, ປ່ຽນແປງ, ລຶບ, ລັກຕໍ່, ລັກຟັງ, ລັກ ຫລື ກັ່ນກອງເອົາຂໍ້ມູນ, ຂ່າວສານ;

14. ນອກຈາກນີ້ ຜູ້ໃຫ້ການບໍລິການໂທລະຄົມມະນາຄົມ ຍັງມີສິດ ແລະ ໜ້າທີ່ອື່ນໆ ຕາມລະບຽບກົດໝາຍຂອງ ສປປ ລາວກ່ຽວກັບການໃຫ້ບໍລິການໂທລະຄົມມະນາຄົມ.

### ມາດຕາ 15. ສິດ ແລະ ໜ້າທີ່ ຂອງຜູ້ໃຊ້ການບໍລິການ ໂທລະຄົມມະນາຄົມ

ຜູ້ໃຊ້ການບໍລິການ ໂທລະຄົມມະນາຄົມມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ໄດ້ຮັບການສະໜອງການບໍລິການ ຢ່າງມີຄຸນນະພາບ, ຖືກຕ້ອງ, ຊັດເຈນ, ມີຄວາມສະດວກ, ວ່ອງໄວ, ປອດໄພ ແລະ ຍຸຕິທຳ;

2. ບໍລິການໂທລະຄົມມະນາຄົມອີກຕໍ່ໜຶ່ງ ໃຫ້ແກ່ຜູ້ໃຊ້ການບໍລິການຜູ້ອື່ນ ຕາມການອະນຸຍາດຂອງ ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ;

3. ສະເໜີຕໍ່ຜູ້ໃຫ້ການບໍລິການ ຫລື ອົງການທີ່ກ່ຽວຂ້ອງຂອງລັດ ເພື່ອແກ້ໄຂຂໍ້ຂັດຂ້ອງທາງດ້ານເຕັກນິກ ແລະ ກວດກາການເກັບຄ່າທຳນຽມ ແລະ ຄ່າບໍລິການ;

4. ປະຕິບັດຕາມລະບຽບການດ້ານເຕັກນິກໃນການນຳໃຊ້ອຸປະກອນໂທລະຄົມມະນາຄົມ ແລະ ລະບຽບການອື່ນໆ ທີ່ອົງການກ່ຽວຂ້ອງໄດ້ວາງອອກ;

5. ປະຕິບັດລະບຽບການຊຳລະຄ່າທຳນຽມ ແລະ ຄ່າບໍລິການຕາມປົກກະຕິ;

6. ຫ້າມນຳໃຊ້ການຕິດຕໍ່ສື່ສານເພື່ອທຳລາຍຄວາມໝັ້ນຄົງ, ຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ ຫລື ວັດທະນະທຳຂອງຊາດ;

ຫ້າມນຳໃຊ້ລະບົບໂທລະຄົມມະນາຄົມ ເພື່ອສ້າງຄວາມເສື່ອມເສຍແກ່ກຽດສັກສີຂອງບຸກຄົນ ຫລື ການຈັດຕັ້ງ;

ຫ້າມດັດປັບຄື້ນຄວາມຖີ່ ຫລືນຳໃຊ້ອຸປະກອນປາຍທາງ, ຕາໜ່າງໂທລະຄົມມະນາຄົມຂອງຕົນເຂົ້າໃສ່ຄື້ນຄວາມຖີ່ ຫລື ອຸປະກອນ, ຕາໜ່າງໂທລະຄົມມະນາຄົມ ຂອງຜູ້ອື່ນເພື່ອສະກັດກັ້ນ, ລົບກວນ, ບຸກລຸກ, ທຳລາຍ,ປ່ຽນແປງ, ລຶບ, ລັກຕໍ່, ລັກຟັງ, ລັກ ຫລື ກັ່ນກອງເອົາຂໍ້ມູນ, ຂ່າວສານ;

7. ຕ້ອງຢູ່ພາຍໃຕ້ການກວດກາຂອງຂະແໜງການທີ່ກ່ຽວຂ້ອງ;

8. ນອກຈາກນີ້ ຜູ້ໃຊ້ການບໍລິການໂທລະຄົມມະນາຄົມ ຍັງມີສິດ ແລະ ໜ້າທີ່ອື່ນໆ ຕາມລະບຽບກົດໝາຍຂອງ ສປປ ລາວ ກ່ຽວກັບການໃຊ້ບໍລິການໂທລະຄົມມະນາຄົມ.

## ໝວດທີ V ການຄຸ້ມຄອງ ແລະ ການກວດກາໂທລະຄົມມະນາຄົມ

### ມາດຕາ 16. ຈຸດປະສົງຂອງການຄຸ້ມຄອງ ແລະ ການກວດກາ

ການຄຸ້ມຄອງ ແລະ ການກວດກາໂທລະຄົມມະນາຄົມ ມີຈຸດປະສົງເຮັດໃຫ້ການນຳໃຊ້ຄື້ນຄວາມຖີ່ແຫ່ງຊາດ, ຕຳແໜ່ງວົງໂຄຈອນດາວທຽມ, ການບໍລິຫານເລກໝາຍ, ລະຫັດອິນເຕີແນັດ

ລະດັບສູງສຸດຂອງປະເທດ ລວມທັງການເຄື່ອນໄຫວທຸລະກິດ ການບໍລິການໂທລະຄົມມະນາຄົມ ປະເພດຕ່າງໆ ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການວ່າດ້ວຍການ ໂທລະຄົມມະນາຄົມ, ກົດໝາຍ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລະບຽບການສາກົນ.

### ມາດຕາ 17. ອົງການຄຸ້ມຄອງ ແລະ ກວດກາໂທລະຄົມມະນາຄົມ

ອົງການຄຸ້ມຄອງ ແລະ ກວດກາໂທລະຄົມມະນາຄົມປະກອບດ້ວຍ:

- ກະຊວງຄົມມະນາຄົມຂົນສົ່ງ ໄປສະນີ ແລະ ກໍ່ສ້າງ;
- ພະແນກຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ;
- ຫ້ອງການຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງປະຈຳເມືອງ.

### ມາດຕາ 18. ສິດ ແລະ ໜ້າທີ່ຂອງກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ

ກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ມີສິດ ແລະ ໜ້າທີ່ຕົ້ນຕໍ ກ່ຽວກັບວຽກງານໂທລະຄົມມະນາຄົມດັ່ງນີ້:

1. ຄົ້ນຄ້ວາ ແລະ ກຳນົດແຜນຍຸດທະສາດກ່ຽວກັບການພັດທະນາການໂທລະຄົມມະນາຄົມ;
2. ກຳນົດນະໂຍບາຍ, ແຜນງານ, ແຜນການ, ໂຄງການ ແລະ ຊອກຫາແຫລ່ງທຶນ ເພື່ອປະກອບເຂົ້າໃນການພັດທະນາ ການໂທລະຄົມມະນາຄົມ;
3. ສົມທົບກັບກະຊວງການເງິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຄົ້ນຄວ້າລະບຽບການກ່ຽວກັບການສ້າງຕັ້ງ, ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນພັດທະນາການໂທລະຄົມມະນາຄົມເພື່ອນຳສະເໜີ ລັດຖະບານພິຈາລະນາຕົກລົງ;
4. ຄົ້ນຄ້ວາ, ສະເໜີ ຫລື ຕົກລົງກ່ຽວກັບການອະນຸຍາດການສ້າງຕັ້ງ, ການສືບຕໍ່, ການໂຈະ ແລະ ການຍົກເລີກ ກິດຈະການໂທລະຄົມມະນາຄົມ;
5. ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອຈອງ, ຄຸ້ມຄອງ ແລະ ແບ່ງປັນຄື້ນຄວາມຖີ່ແຫ່ງຊາດ; ຄຸ້ມຄອງການນຳໃຊ້ຕຳແໜ່ງວົງໂຄຈອນດາວທຽມ, ບໍລິຫານລະຫັດອິນເຕີແນັດລະດັບສູງສຸດຂອງປະເທດ; ຄຸ້ມຄອງຜູ້ໃຫ້ ແລະ ຜູ້ໃຊ້ການບໍລິການ ໂທລະຄົມມະນາຄົມ;
6. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາ ແລະ ສະເໜີລະບຽບການກ່ຽວກັບອັດຕາຄ່າທຳນຽມ, ຄ່າລິຂະສິດ ແລະ ຄ່າບໍລິການຕ່າງໆ;
7. ຄົ້ນຄ້ວາ, ກຳນົດມາດຕະຖານເຕັກນິກ; ຄົ້ນຄ້ວາ ແລະ ເລືອກເຟັ້ນ ເຕັກໂນໂລຊີ ກ່ຽວກັບອຸປະກອນໂທລະຄົມມະນາຄົມ ແລະ ວາງກຳນົດໝາຍການນຳໃຊ້ອຸປະກອນດັ່ງກ່າວ ຢູ່ພາຍໃນປະເທດ;
8. ຄຸ້ມຄອງມະຫາພາກອື່ນໆ ກ່ຽວກັບວຽກງານໂທລະຄົມມະນາຄົມໃນຂອບເຂດທົ່ວປະເທດ;

9. ພົວພັນຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ເພື່ອສ້າງເງື່ອນໄຂ ອໍານວຍຄວາມສະດວກໃຫ້ແກ່ການພັດທະນາໂທລະຄົມມະນາຄົມ.

### ມາດຕາ 19. ສິດ ແລະ ໜ້າທີ່ຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ປະຈໍາແຂວງ, ກໍາແພງນະຄອນ ແລະ ເຂດພິເສດ

ພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງປະຈໍາແຂວງ, ກໍາແພງນະຄອນ ແລະ ເຂດພິເສດມີສິດ ແລະ ໜ້າທີ່ຕົ້ນຕໍກ່ຽວກັບວຽກງານໂທລະຄົມມະນາຄົມ ດັ່ງນີ້:

1. ຕິດຕາມ, ກວດກາການນໍາໃຊ້ອຸປະກອນ ແລະ ຄື້ນຄວາມຖີ່ຕິດຕໍ່ສື່ສານ ລວມທັງການນໍາໃຊ້ອິນເຕີແນັດຢູ່ໃນຂອບເຂດທ້ອງຖິ່ນຂອງຕົນ;

2. ເກັບກໍາຂໍ້ມູນສະຖິຕິຜູ້ໃຊ້ ແລະ ຄວາມຕ້ອງການໃນການໃຊ້ການບໍລິການ ໂທລະຄົມມະນາຄົມ ປະເພດຕ່າງໆ;

3. ຕິດຕາມ ແລະ ກວດກາການດໍາເນີນທຸລະກິດ ຂອງຜູ້ໃຫ້ການບໍລິການໂທລະຄົມມະນາຄົມ ປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບວຽກງານໂທລະຄົມມະນາຄົມ ຕາມການມອບໝາຍຂອງກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ.

### ມາດຕາ 20. ສິດ ແລະ ໜ້າທີ່ຂອງຫ້ອງການຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງປະຈໍາເມືອງ

ຫ້ອງການ ຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງປະຈໍາເມືອງມີສິດ ແລະ ໜ້າທີ່ຕົ້ນຕໍກ່ຽວກັບວຽກງານໂທລະຄົມມະນາຄົມດັ່ງນີ້:

1. ຕິດຕາມກວດກາການບໍລິການໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນເມືອງຂອງຕົນ;

2. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບວຽກງານໂທລະຄົມມະນາຄົມຕາມການມອບໝາຍຂອງພະແນກຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ ປະຈໍາແຂວງ, ກໍາແພງນະຄອນ ແລະ ເຂດພິເສດ.

### ມາດຕາ 21. ເນື້ອໃນການກວດກາ

ການກວດກາໂທລະຄົມມະນາຄົມມີເນື້ອໃນຕົ້ນຕໍດັ່ງນີ້:

1. ກວດກາການວາງແຜນ, ການສໍາຫລວດ, ການອອກແບບໃນການກໍ່ສ້າງ ແລະ ການຕິດຕັ້ງລະບົບໂທລະຄົມມະນາຄົມ;

2. ກວດກາມາດຕະຖານທີ່ຮັບປະກັນຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມໃນການກໍ່ສ້າງແລະ ຕິດຕັ້ງລະບົບໂທລະຄົມມະນາຄົມ;

3. ກວດການມາດຕະຖານເຕັກນິກ ແລະ ເຕັກໂນໂລຊີຂອງພາຫະນະ ແລະ ອຸປະກອນ ໂທລະຄົມມະນາຄົມ;

4. ກວດກາການນໍາໃຊ້ຄື້ນຄວາມຖີ່ຕິດຕໍ່ສື່ສານປະເພດຕ່າງໆ;

5. ກວດກາລະບົບການບໍລິການ ລວມທັງລະບົບບັນຊີການເງິນ ໃນການດຳເນີນທຸລະກິດໂທລະຄົມມະນາຄົມ;

6. ກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການໂທລະຄົມມະນາຄົມ, ກວດກາການປະມູນ, ສັນຍາການຮັບເໝົາກໍ່ສ້າງ ແລະ ຕິດຕັ້ງລະບົບໂທລະຄົມມະນາຄົມ, ການປະຕິບັດສັນຍາຕ່າງໆ ກ່ຽວກັບກິດຈະການ ໂທລະຄົມມະນາຄົມ ທີ່ລັດຖະບານໄດ້ອະນຸມັດໃຫ້ບຸກຄົນ ຫລື ການຈັດຕັ້ງເຊັນສັນຍາກັນ ຢູ່ພາຍໃນ ຫລື ຕ່າງປະເທດ ແລະ ສັນຍາຕ່າງໆ ທີ່ລັດຖະບານໄດ້ເຊັນກັບຕ່າງປະເທດ.

### ມາດຕາ 22. ຮູບການກວດກາ

ການກວດກາໂທລະຄົມມະນາຄົມ ມີສາມຮູບການດັ່ງນີ້:

1. ການກວດກາຢ່າງເປັນລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຢ່າງເປັນລະບົບປົກກະຕິ ແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນຊຶ່ງແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດ ກາຊາບລ່ວງໜ້າ.

ໃນການດຳເນີນການກວດກາໂທລະຄົມມະນາຄົມ ເຈົ້າໜ້າທີ່ຂອງອົງການກວດກາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

## ໝວດທີ VI ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 23. ການແກ້ໄຂຂໍ້ຂັດແຍ່ງທາງດ້ານບໍລິຫານ

ຂໍ້ຂັດແຍ່ງທາງດ້ານບໍລິຫານ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກ ການປະຕິບັດເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນໃບອະນຸຍາດກ່ຽວກັບການດຳເນີນກິດຈະການຕ່າງໆ ທາງດ້ານໂທລະຄົມມະນາຄົມ.

ຂໍ້ຂັດແຍ່ງທາງດ້ານບໍລິຫານ ຈະຖືກແກ້ໄຂຕາມລະບຽບການທີ່ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງວາງອອກ.

### ມາດຕາ 24. ການແກ້ໄຂຂໍ້ຂັດແຍ່ງທາງແພ່ງ

ຂໍ້ຂັດແຍ່ງທາງແພ່ງ ແມ່ນຂໍ້ຂັດແຍ່ງທີ່ເກີດຂຶ້ນຍ້ອນການກໍ່ສ້າງ, ການຕິດຕັ້ງ ຫລື ການບໍລິການໂທລະຄົມມະນາຄົມ ປະເພດຕ່າງໆ ທີ່ກໍ່ຄວາມເສຍຫາຍທາງແພ່ງ ໃຫ້ແກ່ຜູ້ໃຊ້ການບໍລິການ ຫລື ບຸກຄົນອື່ນ.

ການແກ້ໄຂຂໍ້ຂັດແຍ່ງທາງແພ່ງ ຈະດຳເນີນດ້ວຍ ການໄກ່ເກ່ຍຄູ່ຄວາມເສຍກ່ອນ, ຖ້າການໄກ່ເກ່ຍຫາກບໍ່ໄດ້ຮັບຜົນ ຜູ້ຖືກເສຍຫາຍ ຈຶ່ງຮ້ອງຟ້ອງຕໍ່ສານ.

## ຫມວດທີ VII ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 25. ນະໂຍາບາຍຕໍ່ຜູ້ມີຜົນງານ

ຜູ້ລົງທຶນທີ່ໄດ້ດຳເນີນການກໍ່ສ້າງ, ການພັດທະນາ, ການຂະຫຍາຍລະບົບ, ການຜະລິດອຸປະກອນ ແລະ ການບໍລິການໂທລະຄົມມະນາຄົມ ຢ່າງມີປະສິດທິຜົນ, ມີຄວາມກ້າວຫນ້າ, ທັນສະໄຫມ, ມີຄຸນນະພາບສູງ ລວມທັງບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ, ອົງການຈັດຕັ້ງສາກົນຕ່າງໆ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນຊ່ວຍເຫລືອ ການພັດທະນາລະບົບໂທລະຄົມມະນາຄົມ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລ້ວນແຕ່ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມຄວາມເຫມາະສົມ.

### ມາດຕາ 26. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງ ຫາກໄດ້ລະເມີດບົດບັນຍັດໃດຫນຶ່ງຂອງກົດຫມາຍສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃຫມ ຫລື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫລື ຫນັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

### ມາດຕາ 27. ມາດຕະການສຶກສາອົບຮົມ

ບຸກຄົນ ຫລື ການຈັດຕັ້ງຫາກໄດ້ລະເມີດບົດບັນຍັດໃດຫນຶ່ງ ຂອງກົດຫມາຍສະບັບນີ້ໃນສະຖານເບົາ ຈະຖືກສຶກສາອົບຮົມເຊັ່ນ:

- ຜູ້ໃຫ້ການບໍລິການບໍ່ແກ້ໄຂຂໍ້ຂັດຂ້ອງທາງດ້ານເຕັກນິກໃນການຕິດຕັ້ງ, ການສ້ອມແປງ ຫລື ການບໍລິການໂທລະຄົມມະນາຄົມ ປະເພດຕ່າງໆ ຢ່າງທັນການ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ;
- ຜູ້ໃຊ້ການບໍລິການບໍ່ຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕາມປົກກະຕິ ແລະ ອື່ນໆ.

### ມາດຕາ 28. ມາດຕະການປັບໃຫມ

ບຸກຄົນ ຫລື ການຈັດຕັ້ງຫາກໄດ້ລະເມີດບົດບັນຍັດໃດຫນຶ່ງຂອງກົດຫມາຍສະບັບນີ້ຈະຖືກປັບໃຫມເຊັ່ນ:

- ດຳເນີນການບໍລິການໂທລະຄົມມະນາຄົມໂດຍບໍ່ໄດ້ຮັບອະນຸຍາດ;
- ດຳເນີນການບໍລິການໂທລະຄົມມະນາຄົມ ນອກເຫນືອຈາກລາຍການ ແລະ ຂອບເຂດທີ່ໄດ້ຮັບອະນຸຍາດ;
- ເອົາໃບອະນຸຍາດໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫລື ໂອນໃຫ້ຜູ້ອື່ນ.

ກະຊວງຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄ້ວາອອກຂໍ້ກຳນົດ ກ່ຽວກັບລະບຽບການປັບໃຫມ ແລະ ອັດຕາຄ່າປັບໃຫມດັ່ງກ່າວ ເພື່ອສະເຫນີລັດຖະບານ ພິຈາລະນາຕົກລົງ.

## ມາດຕາ 29. ມາດຕະການທາງອາຍາ.

ບຸກຄົນໃດຫາກໄດ້ລະເມີດບົດບັນຍັດໃດຫນຶ່ງ ຂອງກົດຫມາຍວ່າດ້ວຍ ການໂທລະຄົມມະນາຄົມດັ່ງຕໍ່ລົງໄປນີ້ ຈະຖືກລົງໂທດທາງອາຍາ:

1. ການນຳໃຊ້ການຕິດຕໍ່ສື່ສານ ເພື່ອທຳລາຍຄວາມຫມັ້ນຄົງ, ຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ ຫລື ວັດທະນະທຳຂອງຊາດ;

2. ການນຳໃຊ້ລະບົບໂທລະຄົມມະນາຄົມ ເພື່ອສ້າງຄວາມເສື່ອມເສຍແກ່ກຽດສັກສີ ຂອງບຸກຄົນ ຫລື ການຈັດຕັ້ງ;

3. ການດັດປັບຄື້ນຄວາມຖີ່ ຫລື ນຳໃຊ້ອຸປະກອນ, ຕາຫນ່າງໂທລະຄົມມະນາຄົມຂອງຕົນຕໍ່ເຂົ້າໃສ່ ຄື້ນຄວາມຖີ່ ຫລື ອຸປະກອນ, ຕາຫນ່າງໂທລະຄົມມະນາຄົມຂອງຜູ້ອື່ນ ເພື່ອສະກັດກັ້ນ, ລົບກວນ, ບຸກລຸກ, ທຳລາຍ, ປ່ຽນແປງ, ລົບ, ລັກຕໍ່, ລັກຟັງ, ລັກ ຫລື ກັ່ນກອງເອົາຂໍ້ມູນ, ຂ່າວສານຂອງຜູ້ອື່ນ;

4. ການທຳລາຍລະບົບ ແລະ ອຸປະກອນໂທລະຄົມມະນາຄົມຂອງສາທາລະນະ ຫລື ຂອງບຸກຄົນ;

5. ການລັກລອບນຳເຂົ້າອຸປະກອນໂທລະຄົມມະນາຄົມ;

6. ການສວຍໃຊ້ຫນ້າທີ່ຕຳແຫນ່ງ, ການໃຊ້ອຳນາດເກີນຂອບເຂດ, ການໃຫ້ ແລະ ການຮັບສິນບົນ, ການປອມແປງເອກະສານ, ການອອກເອກະສານກ່ຽວກັບການຈັດຕັ້ງ ແລະ ການບໍລິການໂທລະຄົມມະນາຄົມ ໂດຍບໍ່ຖືກຕ້ອງ;

7. ການກະທຳຜິດທາງອາຍາອື່ນໆ ກ່ຽວກັບວຽກງານໂທລະຄົມມະນາຄົມ.

## ມາດຕາ 30. ມາດຕະການໂທດເພີ້ມ.

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 28 ແລະ 29 ຂອງກົດຫມາຍສະບັບນີ້ແລ້ວ ຜູ້ລະເມີດອາດຈະຖືກປະຕິບັດມາດຕະການໂທດເພີ້ມອີກເຊັ່ນ:

- ງົດການດຳເນີນກິດຈະການ;
- ຖອນໃບອະນຸຍາດ;
- ຮິບພາຫະນະອຸປະກອນ ທີ່ນຳໃຊ້ເຂົ້າໃນການກະທຳຜິດ.

## ໝວດທີ VIII ບົດບັນຍັດສຸດທ້າຍ

### ມາດຕາ 31. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 32. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ ໜຶ່ງຮ້ອຍຊາວວັນ ນັບແຕ່ມື້ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ. ບັນດາຂໍ້ກຳນົດບົດບັນຍັດ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ